ຖະໜົນໜອງສ້າງທໍ່, ບ້ານໜອງສ້າງທໍ່, ເມືອງໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ໄປສະນີ 4328
ໂທ: (856-21) 217 727, 212 991 | ອີເມວ: Lao.info@care.org

# ແຈ້ງການເຊີນປະມູນ

ສໍາລັບອຸປະກອນເຄື່ອງຂຽນ ແລະ ເຄື່ອງໃຊ້ຫ້ອງການ

ອົງການ ແຄຣ໌ ນານາຊາດ ປະຈໍາ ສປປ ລາວ
ແມ່ນອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລ, ເຊິ່ງໄດ້ເຄື່ອນໄຫວວຽກງານຢູ່ ສປປ ລາວ ມາຕັ້ງແຕ່ປີ 1992. ພາລະກິດຫຼັກຂອງອົງການ ແຄຣ໌ ແມ່ນເພື່ອປັບປຸງຊີວິດການເປັນຢູ່ ແລະ ຫຼຸດຜ່ອນຄວາມທຸກຍາກຂອງຊຸມຊົນທີ່ທຸກຍາກ ພ້ອມທັງສະໜັບສະໜູນການສົ່ງເສີມບົດບາດຍິງ-ຊາຍ.

ອີງຕາມນະໂຍບາຍການຈັດຊື້-ຈັດຈ້າງຂອງອົງການແຄຣ໌, ອົງການ ແຄຣ໌ ປະຈໍາລາວ ມີຄວາມປະສົງຊອກຫາຜູ້ສະໜອງ (Vendors) ທີ່ມີຄວາມສົນໃຈໃນການເຮັດສັນຍາຮ່ວມມືໄລຍະຍາວ (Framework Agreement) ສໍາລັບການສະໜອງອຸປະກອນເຄື່ອງຂຽນ ແລະ ເຄື່ອງໃຊ້ຫ້ອງການ. ອຸປະກອນເຫຼົ່ານີ້ຈະຖືກນໍາໃຊ້ເຂົ້າໃນກິດຈະກໍາການດໍາເນີນງານຕ່າງໆຂອງອົງການ ແຄຣ໌.

ເອກະສານທີ່ຕ້ອງປະກອບໃນການປະມູນ:

1. ໃບສະເໜີລາຄາ ຕ້ອງລະບຸຊື່ບໍລິສັດ, ທີ່ຢູ່ ແລະ ເບີໂທລະສັບຕິດຕໍ່ໃຫ້ຈະແຈ້ງ.
2. ສໍາເນົາ ໃບທະບຽນວິສາຫະກິດ.
3. ສໍາເນົາ ໃບທະບຽນອາກອນ.
4. ຕື່ມຂໍ້ມູນໃສ່ແບບຟອມສອບຖາມຜູ້ສະໜອງ (Vendor's Questionnaires) ໃຫ້ຄົບຖ້ວນ ແລະ ລະອຽດ (ອົງການ ແຄຣ໌ ຈະສະໜອງແບບຟອມດັ່ງກ່າວໃຫ້ຕາມການຮ້ອງຂໍ ຈາກຜູ້ທີ່ສົນໃຈສະໝັກ).
5. ໃບສະເໜີລາຄາ ຕ້ອງລະບຸລາຄາຕໍ່ໜ່ວຍ ລວມທັງເງື່ອນໄຂການຂາຍ ເປັນຕົ້ນແມ່ນ: ການຮັບປະກັນ, ເງື່ອນໄຂການຈັດສົ່ງ, ເງື່ອນໄຂການຊໍາລະເງິນ, ສະຖານທີ່ຈັດສົ່ງ, ວັນທີຈັດສົ່ງ, ຊື່ຍີ່ຫໍ້ຂອງແຕ່ລະລາຍການ ແລະ ລາຍລະອຽດອື່ນໆ ທີ່ກ່ຽວຂ້ອງກັບຜະລິດຕະພັນ.

**ໝາຍເຫດ:** ເອກະສານຄັດຕິດນີ້ ບໍ່ແມ່ນການສະເໜີເພື່ອເຮັດສັນຍາ, ແຕ່ແມ່ນການເຊື້ອເຊີນໃຫ້ຜູ້ສະໜອງສະເໜີການປະມູນ. ການຮັບເອົາໃບສະເໜີລາຄາ ບໍ່ໄດ້ໝາຍຄວາມວ່າ ອົງການ ແຄຣ໌ ມີພັນທະໃນການມອບສັນຍາໃຫ້ແກ່ຜູ້ສະໜອງໃດໜຶ່ງ ສໍາລັບຜະລິດຕະພັນ ຫຼື ການບໍລິການທັງໝົດ ຫຼື ບາງສ່ວນ.

ເງື່ອນໄຂ ແລະ ຄໍາແນະນໍາໃນການຍື່ນໃບສະເໜີລາຄາ:

1. ການຮ້ອງຂໍໃບສະເໜີລາຄານີ້ ແມ່ນເປັນຂະບວນການແບບເປີດກວ້າງ ແລະ ມີການແຂ່ງຂັນ.
2. ໃບສະເໜີລາຄາຈະຖືກປິດຮັບພາຍໃນເວລາ **16:00 ໂມງ, ວັນທີ 06 ມີນາ 2026,** ໂດຍສົ່ງເຖິງຫ້ອງການ ແຄຣ໌ ນານາຊາດ ເລກທີ 021/01 ບ້ານໜອງສ້າງທໍ່, ໄຊເສດຖາ ນະຄອນຫຼວງວຽງຈັນ ຫຼື ທາງອີເມວຫາ: Lao.Contracts@care.org ບໍ່ໃຫ້ກາຍກໍານົດເວລາທີ່ລະບຸໄວ້ຂ້າງເທິງ. ສໍາລັບຂໍ້ມູນເພີ່ມເຕີມ ຕິດຕໍ່ +8562077333576,
3. ເງື່ອນໄຂໃນສັນຍາຈະຖືກເຈລະຈາ ພາຍຫຼັງທີ່ມີການຄັດເລືອກຜູ້ຊະນະການປະມູນ. ທຸກໆເງື່ອນໄຂໃນສັນຍາຈະຕ້ອງຜ່ານການກວດສອບຈາກພະແນກກົດໝາຍຂອງອົງການ ແຄຣ໌, ເຊິ່ງຈະລວມມີ ຂອບເຂດວຽກ, ງົບປະມານ, ກໍານົດເວລາ ແລະ ລາຍການອື່ນໆ ທີ່ຈໍາເປັນກ່ຽວຂ້ອງກັບໂຄງການ.
4. ກະລຸນາລະບຸໃສ່ໜ້າຊອງ (ຫຼື ຫົວຂໍ້ອີເມວ) ວ່າ: **"Bidding for Stationery & Consumable for CARE"**.
5. ອົງການ ແຄຣ໌ ນານາຊາດ ປະຈໍາລາວ ຂໍສະຫງວນສິດໃນການແຈ້ງຜົນການປະມູນ, ເຊິ່ງຈະມີພຽງແຕ່ຜູ້ທີ່ຊະນະການປະມູນເທົ່ານັ້ນທີ່ຈະໄດ້ຮັບການຕິດຕໍ່ຫາ ແລະ ເອກະສານທັງໝົດທີ່ຍື່ນມາຈະບໍ່ມີການສົ່ງຄືນ ພາຍຫຼັງການຄັດເລືອກໂດຍຄະນະກໍາມະການ.

ດ້ວຍຄວາມເຄົາລົບຢ່າງສູງ
ຄະນະກໍາມະການຈັດຊື້ຈັດຈ້າງ
ວັນທີ 23 ກຸມພາ 2026